# ຜົນໄດ້ຮັບ ຈາກເວທີສົນທະນາ ເພື່ອສະໜັບສະໜູນກອງປະຊຸມໂຕະມົນລະດັບສູງ

**“ພາຍຫຼັງການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ (LDC), ການເປີດກວ້າງຄວາມມຸ່ງມາດປາດຖະໜາໃໝ່ໃນການພັດທະນາ – ການເຕີບໂຕ, ສົ່ງເສີມວຽກເຮັດງານທຳ ແລະ ເຕັກໂນໂລຊີ”**

**ນຳສະເໜີໂດຍ: ທ່ານ ສຸລິວັດ ສຸວັນນະຈູມຄຳ**
**ຮອງລັດຖະມົນຕີກະຊວງການເງິນ**

**ວັນທີ 19 ກັນຍາ 2025**

# ຫົວຂໍ້ນຳສະເໜີ

1. ຄວາມຄືບໜ້າ ແລະ ສິ່ງທ້າທາຍ
2. ບົດຮຽນຈາກປະເທດທີ່ຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ
3. ຜົນໄດ້ຮັບ ຈາກເອທິສິນທະນາ ລະດັບສູງ

# 1. ຄວາມຄືບໜ້າ ແລະ ສິ່ງທ້າທາຍ

- **ເສດຖະກິດມະຫາພາກ**
  - ➢ ຜົນສຳເລັດ: ເຕີບໂຕສະເລ່ຍ 4.24% ແລະ ສຳເລັດບັນດາໂຄງການກໍ່ສ້າງໂຄງລ່າງພື້ນຖານທີ່ສຳຄັນ.
  - ➢ ສິ່ງທ້າທາຍ: ການເຕີບໂຕຍັງເອື່ອຍອີງຊັບພະຍາກອນທຳມະຊາດ, ໜີ້ສິນສາທາລະນະສູງ ແລະ ເສດຖະກິດມະຫາພາກຂາດສະຖຽນລະພາບ.

- **ຊັບພະຍາກອນມະນຸດ**
  - ➢ ຜົນສຳເລັດ: ມີຄວາມຄືບໜ້າລະດັບໜຶ່ງ.
  - ➢ ສິ່ງທ້າທາຍ: ການສຶກສາພົບບັນຫາປະລະການຮຽນ/ສີມືແຮງງານບໍ່ຕອບສະໜອງໜ້າວຽກ, ແລະ ການປົກປ້ອງທາງສັງຄົມຢູ່ໃນລະດັບຕ່ຳ (11%).

- **ການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ**
  - ➢ ຜົນສຳເລັດ: ສາມາດແກ້ໄຂຄວາມທຸກຍາກ ແລະ ຂະຫຍາຍການຊົມໃຊ້ໄຟຟ້າພາກຄົວເຮືອນລະດັບໜຶ່ງ.
  - ➢ ສິ່ງທ້າທາຍ: ສິ່ງທ້າທາຍຍັງສືບຕໍ່ໃນຂົງເຂດໂພຊະນາການ, ສາທາລະນະສຸກ ແລະ ການກຽມພ້ອມຮັບມືກັບການປ່ຽນແປງດິນຟ້າອາກາດ.

- **ການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ**
  - ➢ ຄວາມກົດດັນ: ໃຫ້ການຊ່ວຍເຫຼືອຈາກສາກົນ ແລະ ສິດທິພິເສດທາງການຄ້າຫຼຸດລົງ.
  - ➢ ມາດຕະການ: ຮັບຮອງຍຸດທະສາດຂ້າມຜ່ານສະຖານະພາບປະເທດດ້ອຍພັດທະນາຢ່າງໂລ່ງລ່ຽນ (STS), ສຸມໃສ່ຮັກສາສະຖຽນລະພາບເສດຖະກິດມະກາພາກ, ປັບປຸງກົນຈັກການຈັດຕັ້ງ ແລະ ການກຽມພ້ອມຮັບມືກັບການປ່ຽນແປງດິນຟ້າອາກາດ.

# 2. ບົດຮຽນຈາກປະເທດທີ່ຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ

## ພູຖານ: ຍຸດທະສາດ, ຜົນສໍາເລັດ, ແລະ ປັດໃຈການສະໜັບສະໜູນ

- **ຍຸດທະສາດ:** ຮັກສາດຸ່ນດ່ຽງ ລະຫວ່າງການເຕີບໂຕທາງເສດຖະກິດ ແລະ ການປົກປັກຮັກສາສິ່ງແວດລ້ອມ.
- **ຜົນສໍາເລັດ**: ອັດຕາການຮູ້ໜັງສືຂອງໄວໜຸ່ມສູງ (99%), ອາຍຸຍືນສະເລ່ຍເພີ່ມຂຶ້ນ (ເກີນ70 ປີ), ແລະ ເປັນ ປະເທດດຽວທີ່ອັດຕາການປ່ອຍອາຍກາກບອນຕິດລົບ.
- **ສາມປັດໃຈທີ່ຊ່ວຍ ພູຖານ ຂ້າມຜ່ານອອກຈາກສະຖານະພາບດ້ອຍພັດທະນາຢ່າງມີສະຖຽນລະພາບ:**
  - **ການປະຕິຮູບນະໂຍບາຍ:** ໃຫ້ບຸລິມະສິດການພັດທະນາຊັບພະຍາກອນມະນຸດ, ສະໜັບສະໜູນ ນະໂຍບາຍສ້າງເສດຖະກິດທີ່ຫຼາກຫຼາຍ, ແລະນະໂຍບາຍປົກປັກຮັກສາຊັບພະຍາກອນທໍາມະຊາດ.
  - **ການສ້າງຄວາມເຂັ້ມແຂງທາງການຈັດຕັ້ງ:** ຫຼຸດຜ່ອນຄວາມແຕກແຍກ ແລະ ເອກະເທດ.
  - **ການເປັນຄູ່ຮ່ວມບົນພື້ນຖານການເຄົາລົບເຊິ່ງກັນ ແລະ ກັນ:** ຄວາມເປັນເຈົ້າການພາຍໃນ ແລະ ການສ້າງຄວາມເຂັ້ມແຂງ ແນໃສ່ການຊ່ວຍເຫຼືອຈາກພາຍນອກໃຫ້ຊ່ວຍປັບປຸງການຈັດຕັ້ງພາຍໃນ.

# 2. ບົດຮຽນຈາກປະເທດທີ່ຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ (ຕໍ່)

## ແຜນພັດທະນາເສດຖະກິດ ແລະ ວິໃສທັດ

1. ແຜນພັດທະນາເສດຖະກິດ 5 ປີ ຄັ້ງທີ 13; ແລະ
2. ແຜນງານເສດຖະກິດສັດຕະວັດທີ 21

➢ **ຂະແໜງການບູລິມະສິດ:** ພະລັງງານນໍ້າ, ການທ່ອງທ່ຽວ ແລະ ຂະແໜງການທ່າແຮງໃໝ່ (ເສດຖະກິດດີຈີຕ໋ອນ, ພະລັງງານສະອາດ, ແລະ ບໍລິການ)

➢ **ຈຸດສຸມ:**

- ປັບປຸງນະໂຍບາຍ ແລະ ການຄຸ້ມຄອງບໍລິຫານລັດ, ສົ່ງເສີມພາກເອກະຊົນ, ການລົງທຶນໃນຊັບພະຍາກອນມະນຸດ, ລະບົບສົ່ງເສີມຫົວຄິດປະດິດສ້າງ, ແລະ ການເຂົ້າເຖິງຕະຫຼາດ.
- ກົນໄກຂ້າມຜ່ານການຫັນເຂົ້າສູ່ລະບົບແບບມີການຈັດຕັ້ງ.
- ນະໂຍບາຍສົ່ງເສີ່ມຄວາມມັກຄີເປັນປຶກແຜນ, ປັບປຸງລະບົບຖານຂໍ້ມູນຂ່າວສານ ແລະ ການຄຸ້ມຄອງບໍລິຫານລັດທີ່ຖື ເອົາປະຊາຊົນເປັນໃຈກາງ
- **ສ້າງຕົວຊີ້ບອກວັດລະດັບຄວາມສຸກປະຊາຊົນພາຍໃນ (GNH):** ຮັກສາຄວາມດຸ່ນດ່ຽງ ລະຫວ່າງການເຕີບໂຕ ທາງເສດຖະກິດ ແລະ ການປົກປັກຮັກສາສິ່ງແວດລ້ອມ, ວັດທະນະທໍາ, ຈິດໃຈ ແລະ ການຄຸ້ມຄອງບໍລິຫານລັດ.

# 2. ບົດຮຽນຈາກປະເທດທີ່ຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ (ຕໍ່)

**ເມົາດົບ:ຜົນກະທົບຈາກການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ**

- **ການຫຼຸດລົງຂອງ ຊ.ກ.ພ:**
  - **ຜົນກະທົບ :** ຊ.ກ.ພ ສໍາລັບປະເທດດ້ອຍພັດທະນາຫຼຸດລົງ.
  - **ມາດຕະການ:** ຊ.ກ.ພ ໄດ້ຖືກທົດແທນດ້ວຍທຶນຮູບແບບອື່ນ ພາຍຫຼັງການຟື້ນຟູ ແລະ ການປະຕິຮູບການຈັດຕັ້ງ, ສືບຕໍ່ເຂົ້າເຖິງສະຖາບັນການເງິນສາກົນ ໃຫ້ກູ້ຢືມແບບມີເງື່ອນໄຂ ໂດຍນະໂຍບາຍ ແມ່ນອີງໃສ່ລະດັບລາຍໄດ້.
- **ການຄ້າຕ່າງປະເທດ:**
  - **ຜົນກະທົບ**: ການສູນເສຍສິດທິພິເສດດ້ານການຄ້າຈາກຕະຫຼາດສະຫະພາບ ເອີຣົບ
  - **ມາດຕະການ:** ສືບຕໍ່ຄວາມພະຍາຍາມໃນເຈລະຈາຂໍ້ຕົກລົງການເປັນຄູ່ຮ່ວມເສດຖະກິດ ຫຼື ການຂໍສິດທິພິເສດທົ່ວໄປ.

# 2. ບົດຮຽນຈາກປະເທດທີ່ຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ (ຕໍ່)

**ແຜນພັດທະນາແຫ່ງຊາດ (NDP)**

ຍຸດທະສາດທົ່ວໄປ ເພື່ອພັດທະນາເສດຖະກິດ ແລະ ສັງຄົມ.

- **ຍຸດທະສາດທາງເສດຖະກິດ :**
  - **ການສ້າງຄວາມຫຼາກຫຼາຍ**: ສົ່ງເສີ່ມການທ່ອງທ່ຽວ ແລະ ເຮືອນພັກຕາກອາກາດຢູ່ທ້ອງຖິ່ນ.
  - **ການລົງທຶນທາງສັງຄົມ:** ສົ່ງເສີມວຽກງານປົກປ້ອງທາງສັງຄົມ ແລະ ການເຂົ້າເຖິງການສຶກສາຊັ້ນສູງ.
  - **ການເກັບລາຍຮັບເຂົ້າລັດ:** ອອກມາດຕະການເກັບອາກອນໃໝ່ ແລະ ປະຕິຮູບລັດວິສາຫະກິດ.
  - **ການເງິນ:** ເພີ່ມການກູ້ຢືມຈາກພາຍໃນ, ການເປັນຄູ່ຮ່ວມພາກລັດ-ເອກະຊົນ ແລະ ລະດົມຜູ້ຊ່ວຍເຫຼືອຮູບແບບໃໝ່
- **ວິໄສທັດ**: ກາຍເປັນປະເທດທີ່ພັດທະນາແລ້ວກ່ອນປີ 2040 ຜ່ານການຫັນເປັນດິຈິຕ໋ອນ.

# 3. ຜົນໄດ້ຮັບ ຈາກເອທີອີນທະນາ ລະດັບສູງ

- **ຄວາມກົດດັນຂອງງົບປະມານລັດຈາກ:** ການຫຼຸດລົງຂອງ ຊ ກ ພ, ການສູນເສຍສິດທິພິເສດທາງການຄ້າ ແລະ ການກູ້ຢືມດ້ວຍດອກເບ້ຍທີ່ສູງຂຶ້ນ ພາຍຫຼັງການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ.
- **ຂໍ້ສະເໜີແນະ:**
  - **ລົງເລິກການປະຕິຮູບໂຄງສ້າງ**
  - **ສຸມໃສ່ການເຕີບໂຕທີ່ມີຄຸນນະພາບ**
  - **ສ້າງເສດຖະກິດໃຫ້ຫຼາກຫຼາຍ**
  - **ສ້າງຄູ່ຮ່ວມການຄ້າໃຫ້ຫຼາກຫຼາຍ**
  - **ການຫັນເປັນດີຈີຕ່ອນ**

# 3. ຜົນໄດ້ຮັບ ຈາກເອທີສິນທະນາ ລະດັບສູງ (ຕໍ່)

- **ສິ່ງທ້າທາຍໃນການພັດທະນາຊັບພະຍາກອນມະນຸດຍັງສືບຕໍ່:** ດັດສະນີຊັບພະຍາກອນມະນຸດຢູ່ລະດັບຕ່ຳ (0.46) ໃ… ພາກພື້ນແມ່ນ້ຳຂອງ.
- **ຂໍ້ສະເໜີແນະ:**

**1. ໃຫ້ບູລິມະສິດໃນຂະແໜງການຕ່າງໆໃນແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ 5 ປີຄັ້ງທີ 10**

- ລົງທຶນໃສ່ການສຶກສາ, ພັດທະນາສີມືແຮງງານ, ແລະ ສາທາລະນະສຸກ.
- ສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ.
- ສົ່ງເສີມການສ້າງວຽກເຮັດງານທຳໃຫ້ແກ່ໄວໜຸ່ມ.

**2. ຈຸດສູມພາຍໃຕ້ແຜນພັດທະນາຂອງຂະແໜງການ ເພື່ອການສ້າງວຽກເຮັດງານທຳ**

- ລົງທຶນທາງກາຍະພາບ ແລະ ຊັບພະຍາກອນມະນຸດ ໃຫ້ສົມຄູ່ກັບການປັບປຸງໂຄງລ່າງພື້ນຖານ ແລະ ພັດທະນາສີມືແຮງງານ
- ສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການດຳເນີນທຸລະກິດ.
- ທັດສະນະ: ໝູນໃຊ້ທີ່ຕັ້ງຍຸດທະສາດຂອງ ສປປ ລາວ ເພື່ອຫັນເປັນສູນກາງທາງການຄ້າ ແລະ ບໍລິການ ຜ່ານການພັດທະນາສີມືແຮງງານ ແລະ ການເຕີບໂຕຂອງພາກລັດ-ເອກະຊົນ.

# 3. ຜົນໄດ້ຮັບ ຈາກເອທີສິນທະນາ ລະດັບສູງ (ຕໍ່)

**ຂະແໜງການທີ່ມີທ່າແຮງ**

- **ວຽກງານຂົນສົ່ງ ແລະ ໂຄງລ່າງພື້ນຖານ**:

➢ ການເຊື່ອມໂຍງກັບພາກພື້ນອາຊ່ຽນໂດຍ:
  - ໝູນໃຊ້ແລວທາງລົດໄຟ ລາວ-ຈີນ ແລະ ແຜນການເຊື່ອມຈອດ ວຽງຈັນ-ບາງກອກ.
  - ທາງດ່ວນເຊື່ອມຕໍ່ລະຫວ່າງ ວຽງຈັນ ແລະ ຮ່າໂນ້ຍ.

- **ພະລັງງານ**:
  - ລວມວຽກງານພະລັງງານ ແລະ ບໍ່ແຮ່ ເຂົ້າກັບ ອຸດສາຫະກຳ ແລະ ການຄ້າ ເພື່ອສົ່ງເສີມຄວາມເປັນເອກະລາດ ເປັນເຈົ້າຕົນເອງ ແລະ ສ້າງຄວາມຫຼາກຫຼາຍດ້ານການຜະລິດ.
  - ຫຼຸດການສົ່ງອອກແຮ່ດິບ ແລະ ປຸງແຕ່ງຊັບພະຍາກອນທຳມະຊາດຢູ່ໃນປະເທດ.

- **ກະສິກຳ:**
  - ສຸມໃສ່ສິນຄ້າກະສິກຳປອດສານເຄມີທີ່ມູນຄ່າສູງ ແລະ ສິຄ່າສະເພາະເຂດ ເຂົ້າໃນການແຂ່ງຂັນເພື່ອສົ່ງອອກ.

- **ການທ່ອງທ່ຽວ:**
  - ສົ່ງເສີມການທ່ອງທ່ຽວແບບອະນຸລັກ ແລະ ໝູນໃຊ້ສະຖານທີ່ມໍລະດົກໂລກທີ່ຜ່ານການຮັບຮອງຈາກອົງການຢູເນັດສໂກ.
  - ການປັບປຸງການເຊື່ອມຈອດທາງລົດໄຟ ແລະ ທາງບິກ ຖືເປັນປັດໃຈສຳຄັນ.

# 3. ຜົນໄດ້ຮັບ ຈາກເອທີສິນທະນາ ລະດັບສູງ (ຕໍ່)
# ທິດທາງຕໍ່ໜ້າ

- **ການຫັນເປັນດິຈິຕ໋ອນ ແລະ ພັດທະນາສີມືແຮງງານ**
  - ໝູນໃຊ້ທີ່ຕັ້ງໃກ້ຊິດກັບ ສປ ຈີນ ເພື່ອການຮຽນຮູ້ເຕັກໂນໂລຊີ.
  - ເຊື່ອມສານການຮຽນການສອນດິຈິຕ໋ອນເຂົ້າໃນຫຼັກສູດການສຶກສາ.
- **ການເຕີບໂຕສີຂຽວ ແລະ ຫົວຄິດປະດິດສ້າງ**
  - ສົ່ງເສີມຄວາມຍືນຍົງໃນທຸກຂະແໜງການ.
  - ນຳໃຊ້ປັນຍາປະດິດເຂົ້າໃນວຽກງານຕິດຕາມ.
- **ການຄຸ້ມຄອງບໍລິຫານລັດ ແລະ ການເງິນ**
  - ສົ່ງເສີມໃຫ້ທຸກພາກສ່ວນເຄື່ອນໄຫວພາຍໃຕ້ແຜນຍຸດທະສາດສີຂຽວອັນດຽວກັນ ດ້ວຍຄວາມໂປ່ງໃສ່ ແລະ ຄຸ້ມຄອງລັດດ້ວຍກົດໝາຍ.
  - ສ້າງຕົວແບບພາກທຸລະກິດສີຂຽວທີ່ມີກຳໄລ່ ແລະ ຮັບປະກັນໃຫ້ຂະແໜງການເງິນເຄື່ອນໄຫວໄປທິດທາງດຽວກັບວຽກງານບູລິມະສິດແຫ່ງຊາດ ດ້ວຍຄວາມຮັບຜິດຊອບທີ່ຈະແຈ້ງ.

# 3. ຜົນໄດ້ຮັບ ຈາກເວທີສົນທະນາ ລະດັບສູງ (ຕໍ່)
# ທິດທາງຕໍ່ໜ້າ

- **ຮັກສາຄວາມດຸ່ນດ່ຽງໃນການຄຸ້ມຄອງເສດຖະກິດ:** ຄວບຄຸມປະລິມານເງິນໃນລະບົບເສດຖະກິດ ພ້ອມທັງກະຕຸ້ນການເຄື່ອນໄຫວເສດຖະກິດຕົວຈິງ.
- **ການປະສານງານ ແລະ ຕິດຕາມກວດກາ**: ມີການປະສານງານຢ່າງໃກ້ຊິດຕິດແທດລະຫວ່າງກະຊວງການເງິນ ແລະ ທະນາຄານ ແຫ່ງ ສປປ ລາວ ເພື່ອຄວບຄຸມອັດຕາເງິນເຟີ້, ຮັກສາຄ່າເງິນກີບ, ເພີ່ມທະວີການຕິດຕາມກວດກາທະນາຄານ ແລະ ຮັບປະກັນໃຫ້ການຈັດຕັ້ງປະຕິບັດສອດຄ່ອງກັບລະບຽບການເງິນ.
- **ຄວາມຍືນຍົງທາງການເງິນ**: ປັບປຸງວຽກງານເກັບລາຍຮັບເຂົ້າລັດ, ຄຸ້ມຄອງໜີ້ສິນ ແລະ ລາຍຈ່າຍແຫ່ງລັດໃຫ້ມີປະສິດທິພາບ, ໃຫ້ບຸລິມະສິດແກ່ການລົງທຶນທີ່ຊ່ວຍປະກອບສ່ວນພັດທະນາ ແລະ ເພີ່ມຄວາມໂປ່ງໃສດ້ານໜີ້ສິນ.
- **ການໃຊ້ຈ່າຍທາງສັງຄົມ**: ຂະຫຍາຍການໃຊ້ຈ່າຍໄປສູ່ເປົ້າໝາຍທາງສັງຄົມ ເພື່ອຊຸກຍູ້ການເຕີບໂຕແບບມີສ່ວນຮ່ວມ.
- **ແຮງງານທີ່ມີສີມື ແລະ ການລົງທຶນ**: ສ້າງສະພາບແວດລ້ອມທີ່ເອື້ອອໍານວຍ ພ້ອມທັງສ້າງແຮງຈູງໃຈ ເພື່ອດຶງດູດສີມືແຮງງານ ແລະ ທຶນຮອນຕ່າງປະເທດ.

# ຂໍຂອບໃຈ